ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0894/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 24/03/2025

ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 2/2025

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 27/ຄຄຊ, ລົງ ວັນທີ 29 ມີນາ 2022.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມ ສະພາບໍລິຫານສະໄໝວິສາມັນ ຄັ້ງທີ 2/2025, ວັນທີ 24 ມີນາ 2025, ມີລາຍລະອຽດລຸ່ມນີ້:

1. ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ແລະ ຮອງຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ດັ່ງມີ ລາຍຊື່ດັ່ງນີ້:

   (1) **ທ່ານ ສຸກສະຫວາດ ໂສສຸພັນ** ຜູ້ອຳນວຍການບໍລິສັດໄຟຟ້ານ້ຳງື່ມ 3 ຈຳກັດ ເປັນຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ເກົ່າ.

   ແລະ ແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່ 04 ທ່ານຄື:

   (1) **ທ່ານ ດາວວຽງ ສຸນັນທະລາດ** ຮັກສາການຜູ້ອຳນວຍການໃຫຍ່ ຜ-ຟຟລ ເປັນຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ ຮັບຜິດຊອບສາຍງານພັດທະນາທຸລະກິດ;

   (2) **ທ່ານ ຄຳໃບ ຫຼວງໄຊ** ຜູ້ອຳນວຍການຝ່າຍການເງິນ ເປັນຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ ຮັບຜິດຊອບສາຍງານການເງິນ;

   (3) **ທ່ານ ນາງ ໂພຄົມ ອັບໄພ** ຜູ້ອຳນວຍການຝ່າຍບໍລິຫານງານສະໜັບສະໜຸນອົງກອນ ເປັນຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ ຮັບຜິດຊອບສາຍງານບໍລິຫານ;

   (4) **ທ່ານ ສີລິພົມ ແສງອ່ອນແກ້ວ** ຜູ້ອຳນວຍການບໍລິສັດ E&E ເປັນຮອງຜູ້ອຳນວຍການໃຫຍ່ ຜ-ຟຟລ ຮັບຜິດຊອບ ສາຍງານຜະລິດ.

   ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ເພື່ອພິຈາລະນາຮັບຮອງ.

2. ຮັບຮອງການແຕ່ງຕັ້ງກຳມະການສະພາບໍລິຫານຈຳນວນໜຶ່ງ ເພື່ອປ່ຽນແທນຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່, ການກຳນົດຜູ້ທີ່ມີ ອຳນາດລົງລາຍເຊັນຜູກພັນບໍລິສັດ ແລະ ການກຳນົດອາຍຸຂອງບັນດາກຳມະການສະພາບໍລິຫານບໍລິສັດ; ດັ່ງມີລາຍຊື່ລຸ່ມ ນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

1) **ທ່ານ ອິເລດ ກົມນາວິງ** ຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ ເປັນກຳມະການສະພາບໍລິຫານ;

2) **ທ່ານ ສຸກສະຫວາດ ໂສສຸພັນ** ຮອງຜູ້ອຳນວຍການໃຫຍ່ ຝຟລ/ຜູ້ອຳນວຍການໃຫຍ່ ຜ-ຝຟລ ເປັນກຳມະການສະພາບໍລິຫານ;

3) **ທ່ານ ສຈ.ປອ ພູເພັດ ກ້ຽວພິລາວົງ** ຮອງອະທິການບໍດີມະຫາວິທະຍາໄລແຫ່ງຊາດ ເປັນກຳມະການອິດສະຫຼະ;

4) **ທ່ານ ພັນປານີ ສິດທິລາດ** ຮອງຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປ ລາວ ເປັນກຳມະການອິດສະຫຼະ.

ກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

ກ. ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ຝ່ຽງຜູ້ດຽວ ຫລື;

ຂ. ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ເປັນຕົ້ນໄປ ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ເພື່ອພິຈາລະນາ.

3. ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານຄື: ປ່ຽນຊື່ ແລະ ຂໍ້ມູນຂອງສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າ. ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2025 ເພື່ອພິຈາລະນາຮັບຮອງ.

4. ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄື: ແຕ່ງຕັ້ງ ທ່ານ ສຈ. ປອ ພູເພັດ ກ້ຽວພິລາວົງ ແລະ ທ່ານ ພັນ ປານີ ສິດທິລາດ ກຳມະການອິດສະຫຼະ ເປັນຜູ້ຮັບມອບສັນທະຈາກຜູ້ຖືຮຸ້ນ ເພື່ອປ່ຽນແທນຜູ້ເກົ່າ ສຳລັບກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2025 ແລະ ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024.

5. ຮັບຮອງການແຕ່ງຕັ້ງຜູ້ກວດສອບພາຍນອກຄື ບໍລິສັດ Pricewaterhouse Cooper (Lao) Sole Co., Ltd (PWC) ເປັນຜູ້ກວດສອບບັນຊີພາຍນອກ ຂອງບໍລິສັດ ສຳລັບປີ 2026 - 2028, ເນື່ອງຈາກບໍລິສັດດັ່ງກ່າວຊະນະການປະມູນ ໂດຍມີຄ່າຈ້າງ ຂອງຜູ້ກວດສອບບັນຊີ ເປັນຈຳນວນເງິນທັງໝົດບໍ່ເກີນ 5,147,000,000 ກີບ ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນສາມັນຜູ້ຖືຮຸ້ນ ປະຈຳປີ 2024 ເພື່ອພິຈາລະນາຮັບຮອງ.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392

ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la